**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມນະໂຍບາຍເງິນຕາ

ເລກທີ 1120/ກນງ

ນະຄອນຫຼວງວຽງຈັນ, ວັນທີ 16 ກັນຍາ 2021

# ແຈ້ງການ

**ເຖິງ:** ບັນດາທະນາຄານທຸລະກິດລັດ, ທະນາຄານສະເພາະກິດ, ທະນາຄານທຸລະກິດລັດ-ຮ່ວມທຶນ, ທະນາຄານເອກະຊົນ, ທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ.

**ເລື່ອງ:** ການບໍລິການເປີດບັນຊີເງິນຝາກສະເພາະຂອງບໍລິສັດຂຸດຄົ້ນແຮ່ທາດເພື່ອສົ່ງອອກ.

- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມຂໍ້ຕົກລົງວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນໍາເງິນສົດເຂົ້າ-ອອກ ສປປ ລາວ ສະບັບເລກທີ 454/ທຫລ, ລົງວັນທີ 30 ພຶດສະພາ 2019.

ເພື່ອເຮັດໃຫ້ການຄຸ້ມຄອງເງິນຕາຕ່າງປະເທດ ກໍຄື ການຄຸ້ມຄອງລາຍຮັບເປັນເງິນຕາຕ່າງປະເທດຈາກການສົ່ງອອກແຮ່ທາດ ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ, ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທະນາຄານທຸລະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ເພື່ອເພີ່ມເລກໝາຍບັນຊີໃໝ່ຂອງບໍລິສັດຂຸດຄົ້ນແຮ່ທາດ ເຂົ້າໃນຜັງບັນຊີທະນາຄານທຸລະກິດ ໂດຍຈັດຕັ້ງປະຕິບັດດັ່ງນີ້:

1. ທະນາຄານທຸລະກິດ ເປັນເຈົ້າການໃນການບໍລິການເປີດບັນຊີເງິນຝາກບໍລິສັດຂຸດຄົ້ນແຮ່ທາດ ໃຫ້ແກ່ບໍລິສັດຂຸດຄົ້ນແຮ່ທາດທີ່ໄດ້ຮັບອະນຸຍາດຕາມກົດໝາຍໃນ ສປປ ລາວ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວທຸລະກໍາທາງການເງິນຂອງບໍລິສັດຂຸດຄົ້ນແຮ່ທາດ;
2. ທະນາຄານທຸລະກິດ ຕ້ອງເພີ່ມເລກໝາຍບັນຊີເງິນຝາກຂອງບໍລິສັດຂຸດຄົ້ນແຮ່ທາດເພື່ອສົ່ງອອກ ປະເພດເງິນຝາກກະແສລາຍວັນ ເຂົ້າໃນຜັງບັນຊີທະນາຄານທຸລະກິດ, ຊຶ່ງບັນຊີດັ່ງກ່າວນໍາໃຊ້ສະເພາະທີ່ຕິດພັນກັບບໍລິສັດຂຸດຄົ້ນແຮ່ທາດເພື່ອສົ່ງອອກເທົ່ານັ້ນ, ລາຍລະອຽດເລກໝາຍບັນຊີເງິນຝາກດັ່ງລຸ່ມນີ້:
   - ບັນຊີ 2202 ເງິນຝາກຂອງບໍລິສັດຂຸດຄົ້ນແຮ່ທາດ
     - ບັນຊີ 22021 ເງິນຝາກຂອງບໍລິສັດຂຸດຄົ້ນແຮ່ທາດ ເພື່ອສົ່ງອອກ
       - ບັນຊີ 220211 ເງິນຝາກກະແສລາຍວັນ
         - ບັນຊີ 2202110 ເງິນຝາກກະແສລາຍວັນ

- ບັນຊີ 22072 ດອກເບ້ຍເງິນຝາກກະແສລາຍວັນຂອງບໍລິສັດຂຸດຄົ້ນແຮ່ທາດເພື່ອສົ່ງອອກ ຄ້າງຈ່າຍ.
- ບັນຊີ 410212 ດອກເບ້ຍເງິນຝາກກະແສລາຍວັນຂອງບໍລິສັດຂຸດຄົ້ນແຮ່ທາດ ເພື່ອສົ່ງອອກ.

3. ທະນາຄານທຸລະກິດ ມີໜ້າທີ່ລາຍງານການເຄື່ອນໄຫວບັນຊີເງິນຝາກຂອງບໍລິສັດຂຸດຄົ້ນແຮ່ທາດເພື່ອສົ່ງອອກໃຫ້ແກ່ກົມນະໂຍບາຍເງິນຕາ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກໍານົດອອກແຕ່ລະໄລຍະຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າກົມນະໂຍບາຍເງິນຕາ**

ທະນາຄານ ແຫ່ງ ສປປ ລາວ
ກົມນະໂຍບາຍເງິນຕາ

ຄໍາແກ້ວ ຫຼ້ານະນິເວົາ

ຕິດຕໍ່ພົວພັນ ພະແນກຄຸ້ມຄອງເງິນຕາຕ່າງປະເທດ
ທ່ານ ວິລະສຸກ ສີສຸລາດ
ເບີໂທ: 021-264 590, 020 2808 1560